ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===000===-------

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ 05 /ຄຕຟງ

ນະຄອນຫຼວງວຽງຈັນ, ວັນທີ 19 MAY 2015

# ຄຳສັ່ງ
## ຂອງປະທານຄະນະກຳມະການແຫ່ງຊາດ
## ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
## ວ່າດ້ວຍ ການເພີ່ມທະວີຕິດຕາມກວດກາບັນຊີນິລະນາມ

**ເຖິງ : ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ສະຖາບັນເງິນຝາກໄປສະນີລາວ.**

- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ ລົງວັນທີ 21 ກໍລະກົດ 2014;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 364/ນຍ, ລົງວັນທີ 13 ຕຸລາ 2014;
- ອີງຕາມໜັງສືສະເໜີຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 438/ໜຕຟງ, ລົງວັນທີ 05/5/ 2015.

ເພື່ອຈັດຕັ້ງຜັນຂະຫຍາຍ ມາດຕາ 08 ຂໍ້ທີ 24 ແລະ ມາດຕາ 52 ຂໍ້ທີ 03 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ມີປະສິດທິຜົນ.

## ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ
## ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ອອກຄຳສັ່ງ:

1. ໃຫ້ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ສະຖາບັນເງິນຝາກໄປສະນີລາວ ເອົາໃຈໃສ່ຕິດຕາມກວດກາບັນດາລູກຄ້າທີ່ມາຂໍເປີດບັນຊີເງິນຝາກໃໝ່ (ທຸກສະກຸນເງິນ) ໂດຍສະເພາະການຊອກຮູ້ແຫຼ່ງທີ່ມາຂອງເງິນທີ່ນຳມາຝາກວ່າ: ແມ່ນຂອງຜູ້ກ່ຽວເອງ ຫຼື ຂອງບຸກຄົນທີ່ສາມ ທີ່ນຳມາຝາກໃນນາມຂອງຕົນ ຊຶ່ງອາດຈະເປັນບັນຊີນິລະນາມ. ກໍລະນີ ລູກຄ້ານຳເງິນມາຝາກ ໂດຍບໍ່ຮູ້ແຫຼ່ງທີ່ມາຢ່າງຈະແຈ້ງ ໃຫ້ຢຸດເຊົາການໃຫ້ບໍລິການ ຫຼື ບໍ່ສືບຕໍ່ສາຍພົວພັນກັບລູກຄ້າດັ່ງກ່າວທັນທີ ຫຼັງຈາກນັ້ນໃຫ້ລາຍງານຢ່າງເປັນລາຍລັກອັກສອນໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນ 03 ວັນລັດຖະການ;

2. ກໍລະນີ ທີ່ໄດ້ເປີດບັນຊີເງິນຝາກໃຫ້ລູກຄ້າແລ້ວ ແລະ ຮູ້ວ່າບັນຊີດັ່ງກ່າວ ເປັນບັນຊີນິລະນາມ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນ 03 ວັນລັດຖະການ;
3. ການລາຍງານກ່ຽວກັບບັນຊີນິລະນາມ ໃຫ້ປະຕິບັດຕາມແບບພິມການລາຍງານທຸລະກຳທີ່ສົງໄສ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ;
4. ມອບໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ຕິດຕາມກວດກາການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ແລະ ລາຍງານສະພາບ ໃຫ້ຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊາບເປັນແຕ່ລະໄລຍະ;
5. ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ສະຖາບັນເງິນຝາກໄປສະນີລາວ ຕ້ອງຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ. ກໍລະນີ ບໍ່ຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ ຈະຖືກປັບໃໝຕາມ ມາດຕາ 65 ຂໍ້ 1 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
6. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ**
**ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ປະທານ

ດຣ.ບຸນປອນ ບຸດຕະນະວົງ